ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 097 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 91/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 25/ຄປຈ, ລົງວັນທີ 15 ສິງຫາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 91 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ
## (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 13 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 17 ກໍລະກົດ 2023.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ | ເລກທີ 41 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍສັດນ້ຳ ແລະ ການປະມົງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍ ສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສັດນ້ຳ ແລະ ການປະມົງ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ຮັບປະກັນ ການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ສັດນ້ຳ, ການປະມົງ ໃຫ້ມີຄຸນນະພາບ, ປອດໄພ, ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມທິດສີຂຽວ ແລະ ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 (ປັບປຸງ) ສັດນ້ຳ ແລະ ການປະມົງ

ສັດນ້ຳ ແມ່ນ ສັດທຸກຊະນິດທີ່ເກີດ ແລະ ຂະຫຍາຍຕົວຢູ່ໃນນ້ຳ ຫຼື ມີວົງຈອນຊີວິດໄລຍະໃດໜຶ່ງຢູ່ໃນນ້ຳ ຕາມທຳມະຊາດ ຫຼື ນຳເອົາຈາກທຳມະຊາດມາລ້ຽງ ແລະ ຂະຫຍາຍພັນ ລວມທັງ ໄຂ່, ນ້ຳເຊື້ອ, ໂຕອ່ອນຂອງສັດນ້ຳ.

ການປະມົງ ແມ່ນ ກິດຈະການ ກ່ຽວກັບ ການລ້ຽງ, ການຫາ ແລະ ການປຸງແຕ່ງ ສັດນ້ຳ ລວມທັງການ ເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມພະຍາດສັດນ້ຳ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄຊເຕັດ** (CITES: Convention on International Trade in Endangered Species of Wild Fauna and Flora) ໝາຍເຖິງ ສົນທິສັນຍາວ່າດ້ວຍການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງ ຊາດ ຊຶ່ງຖືກຮັບຮອງ ຢູ່ ວໍຊິງຕັນດີຊີ ໃນວັນທີ 3 ມີນາ 1973 ແລະ ສປປ ລາວ ເຂົ້າເປັນພາຄີ ໃນວັນທີ 1 ມີນາ 2004;
2. **ຜະລິດຕະພັນສິນຄ້າກ່ຽວກັບການປະມົງ** ໝາຍເຖິງ ສັດນ້ຳທີ່ມີຊີວິດ, ຜະລິດຕະພັນສັດນ້ຳ, ຜະລິດຕະພັນສຳຮອງຈາກສັດນ້ຳ, ຜະລິດຕະພັນທາງດ້ານຊີວະ, ເຊື້ອພະຍາດສັດນ້ຳ, ອາຫານສັດນ້ຳ, ຜະລິດຕະພັນການສັດຕະວະແພດ ແລະ ອຸປະກອນ ກ່ຽວກັບ ການລ້ຽງ, ການຫາ ແລະ ການປຸງແຕ່ງ ສັດນ້ຳ;

3. **ຜະລິດຕະພັນສັດນ້ຳ** ໝາຍເຖິງ ຜົນຜະລິດທີ່ໄດ້ມາຈາກສັດນ້ຳ ເຊັ່ນ ຊາກສັດນ້ຳໝົດໂຕ, ຊີ້ນ, ໄຂ່, ນ້ຳເຊື້ອ, ໄຂ່ເຊື້ອ, ໂຕອ່ອນ, ໜັງ, ເຄື່ອງໃນ, ນ້ຳມັນປາ, ປາປົ່ນ ແລະ ກະດູກປາປົ່ນ;

4. **ຜະລິດຕະພັນສຳຮອງຈາກສັດນ້ຳ** ໝາຍເຖິງ ກະດູກ, ກ້າງ, ເກັດ, ຄີ ແລະ ຊິ້ນສ່ວນອື່ນ ຂອງສັດນ້ຳ ທີ່ບໍ່ເໝາະສົມສຳລັບການບໍລິໂພກ ຊຶ່ງສາມາດນຳໃຊ້ໃນຈຸດປະສົງອື່ນ;

5. **ຜະລິດຕະພັນການສັດຕະວະແພດ** ໝາຍເຖິງ ອຸປະກອນ, ຢາສັດຕະວະແພດ ແລະ ສານເຄມີຕ່າງໆທີ່ນຳໃຊ້ເຂົ້າໃນ ການກັນ, ປິ່ນປົວພະຍາດ, ປົ່ນປົວ ຫຼື ປ່ຽນແປງໜ້າທີ່ ຂອງອະໄວຍະວະ ຂອງສັດນ້ຳ;

6. **ໄຂ່ເຊື້ອ** ໝາຍເຖິງ ໄຂ່ສັດນ້ຳທີ່ໄດ້ຮັບການປະຕິສົນທິລະຫວ່າງ ນ້ຳເຊື້ອ ແລະ ຈຸລັງໄຂ່ຂອງສັດນ້ຳ;

7. **ໂຕອ່ອນ** ໝາຍເຖິງ ໄຂ່ເຊື້ອທີ່ມີຊີວິດ ຊຶ່ງກຳລັງພັດທະນາເປັນລູກສັດນ້ຳ;

8. **ປາອໍ** ໝາຍເຖິງ ຝູງປາທີ່ຂຶ້ນມາໂຮມກັນເພື່ອວາງໄຂ່ ແລະ ປະສົມພັນ ຢູ່ແມ່ນ້ຳ, ຫ້ວຍ ຫຼື ບໍລິເວນນ້ຳໃດໜຶ່ງ;

9. **ການຂະຫຍາຍພັນສັດນ້ຳ** ໝາຍເຖິງ ການເພີ່ມຈຳນວນສັດ ດ້ວຍການປະສົມພັນ ແບບທຳມະຊາດ, ເຄິ່ງທຳມະຊາດ, ການປະສົມພັນທຽມ ຫຼື ການນຳໃຊ້ເຕັກນິກວິຊາການອື່ນ;

10. **ພືດນ້ຳ** ໝາຍເຖິງ ພືດທີ່ເກີດ ແລະ ຈະເລີນເຕີບໂຕ ຢູ່ພື້ນນ້ຳ, ໜ້ານ້ຳ, ບໍລິເວນແຄມຝັ່ງນ້ຳ ທີ່ເປັນແຫຼ່ງອາຫານ ແລະ ທີ່ຢູ່ອາໄສ ຂອງສັດນ້ຳ;

11. **ການນຳເຂົ້າສັດນ້ຳ** ໝາຍເຖິງ ການນຳເອົາ ສັດນ້ຳ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ເຂົ້າມາລ້ຽງ, ຂະຫຍາຍພັນ ແລະ ນຳໃຊ້ ໃນ ສປປ ລາວ;

12. **ການສົ່ງອອກສັດນ້ຳ** ໝາຍເຖິງ ການສົ່ງ ສັດນ້ຳ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ອອກໄປຕ່າງປະເທດ;

13. **ການສົ່ງອອກຄືນສັດນ້ຳ** ໝາຍເຖິງ ການນຳເອົາ ສັດນ້ຳ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ໄດ້ນຳເຂົ້າມາ ໃນ ສປປ ລາວ ແລ້ວ ສົ່ງອອກຄືນ ປະເທດຕົ້ນທາງ;

14. **ການສົ່ງຜ່ານສັດນ້ຳ** ໝາຍເຖິງ ການນຳເອົາ ສັດນ້ຳ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ສົ່ງຜ່ານ ສປປ ລາວ ໄປປະເທດອື່ນ;

15. **ດິນພື້ນນ້ຳ** ໝາຍເຖິງ ທີ່ດິນຢູ່ພື້ນນ້ຳ ຊຶ່ງມີ ສັດນ້ຳ, ພືດນ້ຳ, ແຮ່ທາດ ແລະ ອື່ນໆ;

16. **ສາຍພັນ ຮຸ່ນ 1** ໝາຍເຖິງ ລູກ ທີ່ເກີດມາຈາກພໍ່ພັນ ແມ່ພັນ ສັດນ້ຳທຳມະຊາດ ຊຶ່ງໄດ້ຖືກນຳມາລ້ຽງ;

17. **ສາຍພັນ ຮຸ່ນ 2** ໝາຍເຖິງ ລູກ ຂອງສັດນ້ຳ ຂອງສາຍພັນຮຸ່ນ 1;

18. **ເຄື່ອງມືທີ່ບໍ່ມີລັກສະນະດັບສູນ** ໝາຍເຖິງ ອາວຸດພື້ນເມືອງ ແລະ ເຄື່ອງມືຫາສັດນ້ຳແບບພື້ນເມືອງ ຊຶ່ງບໍ່ເປັນໄພຂົ່ມຂູ່ ແລະ ບໍ່ມີຄວາມສ່ຽງຕໍ່ການສູນພັນຂອງສັດນ້ຳ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ**

ລັດ ຊຸກຍູ້, ສົ່ງເສີມ ວຽກງານສັດນ້ຳ ແລະ ການປະມົງ ດ້ວຍການວາງນະໂຍບາຍ, ກົດໝາຍ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກວິຊາການ, ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນວຽກງານດັ່ງກ່າວ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນດ້ານທຶນ ແລະ ເຕັກນິກວິຊາການ ເຂົ້າໃນການພັດທະນາວຽກງານສັດນ້ຳ ແລະ ການປະມົງ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ຍືນຍົງ.

ລັດ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈັດຕັ້ງເປັນກຸ່ມ, ເປັນສະຫະກອນ, ເປັນສະມາຄົມ ເພື່ອສົ່ງເສີມການລ້ຽງ, ການຫາ, ການປຸງແຕ່ງ ສັດນ້ຳ ໃຫ້ມີປະສິດທິຜົນ ໂດຍຖືກຕ້ອງຕາມກົດໝາຍ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ**

ວຽກງານສັດນ້ຳ ແລະ ການປະມົງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຖືເອົາການປົກປັກຮັກສາ, ການລ້ຽງ ເປັນວຽກງານຕົ້ນຕໍ, ເອົາການຄຸ້ມຄອງການຫາສັດນ້ຳ ເປັນວຽກງານສຳຄັນ ແລະ ການມີສ່ວນຮ່ວມຂອງທົ່ວປວງຊົນ;
4. ມີຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 (ປັບປຸງ) ກຳມະສິດກ່ຽວກັບສັດນ້ຳ**

ສັດນ້ຳທຸກປະເພດຕາມທຳມະຊາດ ໃນດິນແດນຂອງ ສປປ ລາວ ທີ່ບໍ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ. ລັດ ຮັບຮູ້ສິດນຳໃຊ້ສັດນ້ຳຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມກົດໝາຍ.

ສັດນ້ຳທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລ້ຽງ ແລະ ຂະຫຍາຍພັນ ດ້ວຍເງື່ອນໄຂ ຫຼື ທຶນ ຂອງຕົນ ໂດຍໄດ້ຮັບການອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້ ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ.

**ມາດຕາ 7 (ປັບປຸງ) ພັນທະຂອງພົນລະເມືອງ**

ພົນລະເມືອງທຸກຄົນ ມີພັນທະໃນການເຂົ້າຮ່ວມ, ປະກອບສ່ວນ ແລະ ໃຫ້ການຮ່ວມມື ໃນວຽກງານສັດນ້ຳ ແລະ ການປະມົງ ຕາມກົດໝາຍ ເປັນຕົ້ນ ການແຈ້ງ ຫຼື ລາຍງານ ກ່ຽວກັບການເກີດພະຍາດສັດນ້ຳ, ການກະທຳທີ່ເປັນການລະເມີດກົດໝາຍ, ການສະກັດກັ້ນຜົນກະທົບທາງລົບ ທີ່ຈະເກີດຂຶ້ນຕໍ່ສັດນ້ຳ ແລະ ການປະມົງ.

**ມາດຕາ 8 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍ ສະບັບນີ້ ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານສັດນ້ຳ ແລະ ການປະມົງ ຢູ່ ສປປ ລາວ.

**ມາດຕາ 9 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ພັດທະນາບຸກຄະລາກອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຂະຫຍາຍຕົວ, ເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາ ຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ສັດນ້ຳ
## ໝວດທີ 1
## ປະເພດສັດນ້ຳ

**ມາດຕາ 10 (ປັບປຸງ) ປະເພດສັດນ້ຳ**

ສັດນ້ຳ ຢູ່ ສປປ ລາວ ແບ່ງເປັນ ສາມປະເພດ ດັ່ງນີ້:

1. ສັດນ້ຳປະເພດຫວງຫ້າມ ແມ່ນ ສັດນ້ຳບັນຊີ I;
2. ສັດນ້ຳປະເພດຄຸ້ມຄອງ ແມ່ນ ສັດນ້ຳບັນຊີ II;
3. ສັດນ້ຳປະເພດທົ່ວໄປ ແມ່ນ ສັດນ້ຳບັນຊີ III.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງບັນຊີສັດນ້ຳ ໃນແຕ່ລະໄລຍະ.

**ມາດຕາ 11 (ປັບປຸງ) ສັດນ້ຳບັນຊີ I**

ສັດນ້ຳບັນຊີ I ແມ່ນ ສັດນ້ຳ ທີ່ຫາຍາກ, ຖືກໄພຂົ່ມຂູ່, ມີຄວາມສ່ຽງຕໍ່ການສູນພັນ, ມີຄວາມສຳຄັນຕໍ່ລະບົບນິເວດ, ການທ່ອງທ່ຽວ ແລະ ການສຶກສາຄົ້ນຄວ້າດ້ານວິທະຍາສາດ.

ສັດນ້ຳບັນຊີ I ຕ້ອງໄດ້ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ.

**ມາດຕາ 12 (ປັບປຸງ) ສັດນ້ຳບັນຊີ II**

ສັດນ້ຳບັນຊີ II ແມ່ນ ສັດນ້ຳ ທີ່ຍັງບໍ່ຖືກໄພຂົ່ມຂູ່ຕໍ່ການສູນພັນ, ມີຄຸນປະໂຫຍດທາງດ້ານລະບົບນິເວດ, ເສດຖະກິດ-ສັງຄົມ ແລະ ການສຶກສາຄົ້ນຄວ້າດ້ານວິທະຍາສາດ.

ສັດນ້ຳບັນຊີ II ຕ້ອງມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ຄວບຄຸມການນຳໃຊ້.

**ມາດຕາ 13 (ປັບປຸງ) ສັດນ້ຳບັນຊີ III**

ສັດນ້ຳບັນຊີ III ແມ່ນ ສັດນ້ຳ ທີ່ສາມາດຂະຫຍາຍພັນໄດ້ຕາມທຳມະຊາດຢ່າງກວ້າງຂວາງ ຊຶ່ງມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ລະບົບນິເວດ, ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການສຶກສາຄົ້ນຄວ້າດ້ານວິທະຍາສາດ.

ສັດນ້ຳບັນຊີ III ສາມາດຊົມໃຊ້ໄດ້ ຕາມກົດໝາຍ ແລະ ຮັບປະກັນໃຫ້ມີການນຳໃຊ້ແບບຍືນຍົງ.

## ໝວດທີ 2
## ການຄຸ້ມຄອງສັດນ້ຳ

**ມາດຕາ 14 (ໃໝ່) ການຄຸ້ມຄອງສັດນ້ຳ**

ການຄຸ້ມຄອງສັດນ້ຳ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການຂຶ້ນທະບຽນ ແລະ ການແຈ້ງບັນຊີ ສັດນ້ຳ;
2. ການຄ້າຂາຍສັດນ້ຳ;
3. ການເຄື່ອນຍ້າຍສັດນ້ຳ;
4. ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນ້ຳ;
5. ການຂົນສົ່ງສັດນ້ຳ;
6. ການສ້າງສວນສັດນ້ຳ;

7. ການສ້າງຟາມສັດນ້ຳ;
8. ການສະແດງສັດນ້ຳ;
9. ການສ້າງສາລະຄະດີສັດນ້ຳ;
10. ການທ່ອງທ່ຽວແບບອະນຸລັກສັດນ້ຳ;
11. ພິພິທະພັນສັດນ້ຳ;
12. ການເກັບຮັກສາ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ;
13. ການຫຼຸດຜ່ອນຜົນກະທົບຕໍ່ສັດນ້ຳຈາກການພັດທະນາໂຄງການ;
14. ກິດຈະການອື່ນ.

**ມາດຕາ 15 (ໃໝ່) ການຂຶ້ນທະບຽນ ແລະ ການແຈ້ງບັນຊີ ສັດນ້ຳ**

ສັດນ້ຳບັນຊີ I ທີ່ນຳມາລ້ຽງ, ຂະຫຍາຍພັນຢູ່ໃນ ສວນສັດນ້ຳ, ຟາມສັດນ້ຳ ແລະ ສະຖານທີ່ອື່ນ ທີ່ໄດ້ຮັບອະນຸຍາດ ລວມທັງ ຊາກ, ຊິ້ນສ່ວນ ຫຼື ຜະລິດຕະພັນ ສັດນ້ຳນັ້ນ ຕ້ອງໄດ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ສັດນ້ຳບັນຊີ II ທີ່ນຳມາລ້ຽງ ຫຼື ຂະຫຍາຍພັນຢູ່ໃນ ສວນສັດນ້ຳ, ຟາມສັດນ້ຳ ແລະ ສະຖານທີ່ອື່ນ ເພື່ອຈຸດປະສົງທາງການຄ້າ ຕ້ອງໄດ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງແຈ້ງບັນຊີ ຈຳນວນ, ຊະນິດພັນ, ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງສັດນ້ຳທີ່ຢູ່ໃນການຄອບຄອງຂອງຕົນ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ໃນແຕ່ລະປີ.

ສຳລັບສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳໜ່ວຍງານຄຸ້ມຄອງໄຊເຕັດ ຕາມລະບຽບການທີ່ກ່ຽວຂ້ອງ.

ສັດນ້ຳບັນຊີ III ທີ່ນຳມາລ້ຽງ ຫຼື ຂະຫຍາຍພັນ ບໍ່ຈຳເປັນຕ້ອງຂຶ້ນທະບຽນ ແລະ ແຈ້ງບັນຊີ ສັດນ້ຳ.

**ມາດຕາ 16 (ໃໝ່) ການຄ້າຂາຍສັດນ້ຳ**

ສັດນ້ຳບັນຊີ I ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ບໍ່ອະນຸຍາດໃຫ້ຄ້າຂາຍຢ່າງເດັດຂາດ.

ສັດນ້ຳບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ເລີ່ມແຕ່ສາຍພັນ ຮຸ່ນ 2 ແລະ ຮຸ່ນຕໍ່ໄປ ອະນຸຍາດໃຫ້ຄ້າຂາຍໄດ້, ສ່ວນພໍ່ພັນ, ແມ່ພັນ ແລະ ສາຍພັນ ຮຸ່ນ 1 ບໍ່ອະນຸຍາດໃຫ້ຄ້າຂາຍ. ພໍ່ພັນ, ແມ່ພັນ ໃຫ້ປ່ອຍຄືນສູ່ທຳມະຊາດ, ສ່ວນສາຍພັນ ຮຸ່ນ 1 ໃຫ້ຮັກສາໄວ້ເປັນພໍ່ແມ່ພັນ ຫຼື ປ່ອຍຄືນສູ່ທຳມະຊາດ.

ສັດນ້ຳບັນຊີ III ອະນຸຍາດໃຫ້ຄ້າຂາຍ ຕາມກົດໝາຍ.

ການຄ້າຂາຍສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 17 (ໃໝ່) ການເຄື່ອນຍ້າຍສັດນ້ຳ**

ການເຄື່ອນຍ້າຍສັດນ້ຳ ບັນຊີ I ແລະ ບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ລະຫວ່າງແຂວງຕໍ່ແຂວງ ຕ້ອງຂໍອະນຸຍາດນຳພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ຕ້ອງມີ ໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດນ້ຳ ແລະ ໃບຢັ້ງຢືນຖິ່ນກຳເນີດ ຫຼື ແຫຼ່ງທີ່ມາ ຕາມແຕ່ລະກໍລະນີ.

ການເຄື່ອນຍ້າຍສັດນ້ຳ ບັນຊີ I ແລະ ບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ລະຫວ່າງເມືອງຕໍ່ເມືອງ ຕ້ອງຂໍອະນຸຍາດນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ຕ້ອງມີ ໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດນ້ຳ ແລະ ໃບຢັ້ງຢືນຖິ່ນກຳເນີດ ຫຼື ແຫຼ່ງທີ່ມາ ຕາມແຕ່ລະກໍລະນີ.

ການເຄື່ອນຍ້າຍສັດນ້ຳບັນຊີ III ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງມີໃບຢັ້ງຢືນສຸຂະພາບສັດນ້ຳ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດນ້ຳ ຕາມແຕ່ລະກໍລະນີ.

**ມາດຕາ 18 (ໃໝ່) ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນ້ຳ**

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ສັດນ້ຳບັນຊີ I ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ຕ້ອງຂໍອະນຸຍາດນຳລັດຖະບານ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້;

2. ສັດນ້ຳ ບັນຊີ II ແລະ ບັນຊີ III ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ຕ້ອງຂໍອະນຸຍາດນຳ ກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸມັດແຜນການປະຈຳປີ ສຳລັບການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳທຸກຊະນິດ ທີ່ຢູ່ໃນບັນຊີໄຊເຕັດ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 19 (ໃໝ່) ການຂົນສົ່ງສັດນ້ຳ**

ການຂົນສົ່ງສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພ ແລະ ຕ້ອງປະຕິບັດຕາມເງື່ອນໄຂ, ມາດຕະຖານການປະຕິບັດງານທີ່ດີ ສຳລັບສັດນ້ຳ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ແຕ່ລະຊະນິດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 20 (ໃໝ່) ການສ້າງສວນສັດນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດສ້າງສວນສັດນ້ຳ ເພື່ອສະສົມ, ຂະຫຍາຍພັນ, ສະແດງສັດນ້ຳ; ໂຄສະນາ ເຜີຍແຜ່ ແລະ ປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮູ້ຈັກຄຸນປະໂຫຍດ, ຮັກ, ຫວງແຫນ, ປົກປັກຮັກສາ ແລະ ພັດທະນາ ສັດນ້ຳ ໃຫ້ຍືນຍົງ ໃຫ້ຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

ມາດຕະຖານ ແລະ ເງື່ອນໄຂ ກ່ຽວກັບການສ້າງສວນສັດນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 (ໃໝ່) ການສ້າງຟາມສັດນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ສ້າງຟາມສັດນ້ຳ ເພື່ອເອົາສັດນ້ຳ ຈາກທຳມະຊາດ ຫຼື ໄດ້ມີການຂະຫຍາຍພັນແລ້ວ ມາລ້ຽງ, ຄົ້ນຄວ້າທົດລອງ, ຂະຫຍາຍພັນເປັນສິນຄ້າ ຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໃຫ້ຂໍອະນຸຍາດ ນຳກະຊວງກະສິກຳ ແລະ ປ່າໄມ້.

ມາດຕະຖານ ແລະ ເງື່ອນໄຂ ກ່ຽວກັບການສ້າງຟາມສັດນ້ຳ ແຕ່ລະຊະນິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ໃໝ່) ການສະແດງສັດນ້ຳ**

ການນຳເອົາສັດນ້ຳ ໄປສະແດງຢູ່ສະຖານທີ່ໃດໜຶ່ງພາຍໃນປະເທດ ສາມາດດຳເນີນການໄດ້ໂດຍບໍ່ຕ້ອງຂໍອະນຸຍາດ.

ການນຳເອົາສັດນ້ຳ ອອກໄປສະແດງຢູ່ຕ່າງປະເທດ ຫຼື ນຳເອົາສັດນ້ຳຈາກຕ່າງປະເທດ ເຂົ້າມາສະແດງ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດ ນຳອອກ ຫຼື ນຳເຂົ້າ ຊົ່ວຄາວ ນຳລັດຖະບານ ສຳລັບສັດນ້ຳບັນຊີ I ແລະ ນຳກະຊວງກະສິກຳ ແລະ ປ່າໄມ້ ສຳລັບສັດນ້ຳ ບັນຊີ II ແລະ ບັນຊີ III ແລະ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ການນຳເອົາສັດນ້ຳອອກໄປສະແດງຢູ່ຕ່າງປະເທດນັ້ນ ເມື່ອຮອດກຳນົດເວລາຕາມສັນຍາແລ້ວ ຕ້ອງນຳສົ່ງສັດນ້ຳນັ້ນຄືນ. ໃນກໍລະນີສັດນ້ຳດັ່ງກ່າວ ຫາກມີການອອກລູກ ກໍຕ້ອງນຳສົ່ງລູກມາພ້ອມ, ຖ້າສັດນ້ຳທີ່ນຳໄປສະແດງຫາກຕາຍ ຕ້ອງໄດ້ສົ່ງ ຊາກ ຫຼື ຊິ້ນສ່ວນຂອງ ສັດນ້ຳນັ້ນຄືນ ແລະ ມີຄວາມຮັບຜິດຊອບຕາມສັນຍາ.

ການນຳເອົາສັດນ້ຳໄປສະແດງຢູ່ຕ່າງປະເທດນັ້ນຕ້ອງມີ ໃບຢັ້ງຢືນສຸຂະພາບສັດນ້ຳ, ໃບຢັ້ງຢືນກຳມະສິດສັດນ້ຳ ຫຼື ສັນຍາ, ສັນຍາຄ້ຳປະກັນ ແລະ ປະຕິບັດຕາມກົດໝາຍຂອງປະເທດນຳເຂົ້າ.

ສຳລັບການນຳເອົາສັດນ້ຳທີ່ຢູ່ໃນບັນຊີໄຊເຕັດ ໄປສະແດງຢູ່ຕ່າງປະເທດ ໃຫ້ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

### ມາດຕາ 23 (ໃໝ່) ການສ້າງສາລະຄະດີສັດນ້ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ສ້າງສາລະຄະດີສັດນ້ຳ ເພື່ອເຜີຍແຜ່, ປູກຈິດສຳນຶກ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ສັດນ້ຳ ຕິດພັນກັບການສົ່ງເສີມການທ່ອງທ່ຽວທຳມະຊາດ, ວິຖີດຳລົງຊີວິດ ແລະ ວັດທະນະທຳອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 24 (ໃໝ່) ການທ່ອງທ່ຽວ ແບບອະນຸລັກສັດນ້ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນການທ່ອງທ່ຽວທີ່ຕິດພັນກັບການອະນຸລັກສັດນ້ຳ ຕາມທີ່ລັດຈັດສັນໃຫ້ ແລະ ບໍ່ສົ່ງຜົນກະທົບທາງລົບ ຕໍ່ຊີວະນານາພັນ ແລະ ສິ່ງແວດລ້ອມ ແຕ່ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້.

### ມາດຕາ 25 (ໃໝ່) ພິພິທະພັນສັດນ້ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສ້າງພິພິທະພັນສັດນ້ຳ ເພື່ອເປັນສະຖານທີ່ສະສົມ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທຸກປະເພດ ແຕ່ຕ້ອງຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບົນພື້ນຖານການເຫັນດີຈາກຂະແໜງການກະສິກຳ ແລະ ປ່າໄມ້.

### ມາດຕາ 26 (ໃໝ່) ການເກັບຮັກສາ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ

ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ໄດ້ຈາກ ການມອບ, ການສົ່ງຄືນ ຫຼື ການຮິບ ຕ້ອງເກັບຮັກສາໄວ້ໃນສະຖານທີ່ປອດໄພ ພາຍໃຕ້ການຄຸ້ມຄອງຂອງຂະແໜງການກະສິກຳ ແລະ ປ່າໄມ້. ສຳລັບ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ນຳມາເກັບຮັກສາໄວ້ ຢູ່ໜ່ວຍງານຄຸ້ມຄອງວຽກງານໄຊເຕັດ.

ສຳລັບ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ຖືກຍຶດ ໃນຂະບວນການດຳເນີນຄະດີ ຕ້ອງໄດ້ເກັບຮັກສາໄວ້ໃນສະຖານທີ່ປອດໄພ ຈົນກວ່າຈະສິ້ນສຸດການດຳເນີນຄະດີ. ໃນກໍລະນີ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ທີ່ມີລັກສະນະເນົ່າເປື່ອຍ ຫຼື ບໍ່ສາມາດເກັບຮັກສາໄວ້ດົນ ຫຼື ເກັບຮັກສາທີ່ນຳໃຊ້ງົບປະມານສູງ ຕ້ອງແຕ່ງຕັ້ງຄະນະກຳມະການເພື່ອແກ້ໄຂຕາມລະບຽບການ.

### ມາດຕາ 27 (ໃໝ່) ການຫຼຸດຜ່ອນຜົນກະທົບຕໍ່ສັດນ້ຳຈາກການພັດທະນາໂຄງການ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຄງການລົງທຶນ ເພື່ອຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ສັດນ້ຳ ແລະ ຖິ່ນທີ່ຢູ່ອາໄສຂອງສັດນ້ຳ. ໃນກໍລະນີໂຄງການຫາກສົ່ງຜົນກະທົບຕໍ່ສັດນ້ຳ ຜູ້ພັດທະນາໂຄງການ ຕ້ອງຮັບຜິດຊອບຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການຊົດເຊີຍຕາມກົດໝາຍ.

ໃນໄລຍະກະກຽມໂຄງການ, ຖ້າຜົນຂອງການປະເມີນຄວາມເປັນໄປໄດ້ ບໍ່ສາມາດທົດແທນຊີວະນານາພັນເທົ່າເດີມ, ໂຄງການດັ່ງກ່າວ ກໍຈະບໍ່ໄດ້ຮັບການອະນຸມັດ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດກ່ຽວກັບການຊົດເຊີຍຜົນກະທົບຕໍ່ສັດນ້ຳ.

## ໝວດທີ 3
## ການປົກປັກຮັກສາ ແລະ ພັດທະນາ ສັດນໍ້າ

**ມາດຕາ 28 (ໃໝ່) ການປົກປັກຮັກສາ ແລະ ພັດທະນາ ສັດນໍ້າ**

ການປົກປັກຮັກສາ ແລະ ພັດທະນາ ສັດນໍ້າ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການສໍາຫຼວດສັດນໍ້າ;
2. ການກໍານົດຖິ່ນທີ່ຢູ່ອາໄສ ແລະ ເຂດປົກປັກຮັກສາພັນ ສັດນໍ້າ;
3. ການສ້າງວັງສະຫງວນ;
4. ການສ້າງສູນຟື້ນຟູສຸຂະພາບສັດນໍ້າ;
5. ການພັດທະນາສັດນໍ້າ;
6. ກິດຈະການອື່ນ.

**ມາດຕາ 29 (ໃໝ່) ການສໍາຫຼວດສັດນໍ້າ**

ການສໍາຫຼວດສັດນໍ້າ ແມ່ນ ການເກັບກໍາຂໍ້ມູນ ກ່ຽວກັບຊະນິດ, ຈໍານວນ, ຄວາມຫຼາກຫຼາຍ, ສະພາບການຄົງຕົວ, ການຂະຫຍາຍຕົວ, ຖິ່ນທີ່ຢູ່ອາໄສ, ເຂດປົກປັກຮັກສາພັນ ສັດນໍ້າ ແລະ ອື່ນໆ.

ຂະແໜງການກະສິກໍາ ແລະ ປ່າໄມ້ ເປັນເຈົ້າການໃນການສໍາຫຼວດສັດນໍ້າ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ສ້າງເປັນລະບົບຖານຂໍ້ມູນ ຂ່າວສານໄວ້ ເພື່ອສະໜອງໃຫ້ແກ່ການວາງແຜນພັດທະນາສັດນໍ້າ ແຕ່ລະເຂດໃນແຕ່ລະໄລຍະ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງໃນການສໍາຫຼວດ ຫຼື ຕ້ອງການຂໍ້ມູນການສໍາຫຼວດສັດນໍ້າ ຕ້ອງຂໍອະນຸຍາດນໍາຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 30 (ໃໝ່) ການກໍານົດຖິ່ນທີ່ຢູ່ອາໄສ ແລະ ເຂດປົກປັກຮັກສາພັນ ສັດນໍ້າ**

ຂະແໜງການກະສິກໍາ ແລະ ປ່າໄມ້ ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ກໍານົດຖິ່ນທີ່ຢູ່ອາໄສ ແລະ ເຂດປົກປັກຮັກສາພັນ ສັດນໍ້າ ຕາມຂໍ້ມູນຕົວຈິງທີ່ໄດ້ຈາກການສໍາຫຼວດດ້ວຍການມີສ່ວນຮ່ວມຂອງປະຊາຊົນ ເປັນຕົ້ນ ເຂດທີ່ມີເງື່ອນໄຂສ້າງວັງສະຫງວນ, ເຂດປາອົບ, ແຫຼ່ງສັດນໍ້າວາງໄຂ່, ເຂດຈະເລີນເຕີບໂຕຂອງລູກສັດນໍ້າໄວອ່ອນ.

**ມາດຕາ 31 (ໃໝ່) ການສ້າງວັງສະຫງວນ**

ວັງສະຫງວນ ແມ່ນ ແຫຼ່ງນໍ້າໃດໜຶ່ງ ທີ່ກໍານົດຂຶ້ນຢູ່ຕາມ ແມ່ນໍ້າ, ອ່າງເກັບນໍ້າ, ອ່າງຮັບນໍ້າ ທີ່ມີນໍ້າຕະຫຼອດປີ ເພື່ອເປັນແຫຼ່ງທີ່ຢູ່ອາໄສ ແລະ ແຜ່ພັນຢ່າງປອດໄພຂອງສັດນໍ້າ.

ການສ້າງວັງສະຫງວນ ໃຫ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະ ປົກປັກຮັກສາວັງສະຫງວນ ແລະ ປະກອບສ່ວນທຶນ, ວັດຖຸປະກອນ ເຂົ້າໃນການບູລະນະວັງສະຫງວນ ໃຫ້ມີຄວາມຍືນຍົງ.

**ມາດຕາ 32 (ໃໝ່) ການສ້າງສູນຟື້ນຟູສຸຂະພາບສັດນໍ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງສູນຟື້ນຟູສຸຂະພາບສັດນໍ້າ ເພື່ອເປັນບ່ອນ ພັກຟື້ນ, ປິ່ນປົວ ສັດນໍ້າ ທີ່ຕິດເຊື້ອພະຍາດ, ບາດເຈັບ ຫຼື ອ່ອນເພຍ ຕ້ອງຂໍອະນຸຍາດນໍາກະຊວງກະສິກໍາ ແລະ ປ່າໄມ້.

ໃນກໍລະນີສັດນ້ຳ ທີ່ຖືກຍຶດ, ອາຍັດ, ຮິບ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມອບໃຫ້ ຕ້ອງໄດ້ນຳມາກວດສຸຂະພາບ, ຟື້ນຟູ ແລະ ປິ່ນປົວ ຢູ່ສູນຟື້ນຟູສຸຂະພາບສັດນ້ຳ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການກ່ຽວກັບການສ້າງສູນຟື້ນຟູສຸຂະພາບສັດນ້ຳ.

**ມາດຕາ 33 (ໃໝ່) ການພັດທະນາສັດນ້ຳ**

ການພັດທະນາສັດນ້ຳ ແມ່ນ ການຂະຫຍາຍພັນສັດນ້ຳທຸກປະເພດ ຕາມທຳມະຊາດ ໃຫ້ມີຈຳນວນເພີ່ມຂຶ້ນ ດ້ວຍການນຳໃຊ້ມາດຕະການດ້ານເຕັກນິກວິທະຍາສາດ ທັງແມ່ນການຟື້ນຟູບູລະນະຖິ່ນທີ່ຢູ່ອາໄສທີ່ເສື່ອມໂຊມ ລວມທັງແຫຼ່ງອາຫານ ແລະ ແຫຼ່ງແຜ່ພັນ ເພື່ອໃຫ້ສັດນ້ຳດັ່ງກ່າວ ສາມາດມີຊີວິດຢ່າງເປັນປົກກະຕິ ພ້ອມກັນນັ້ນ ກໍຕ້ອງປຸກລະດົມທົ່ວປວງຊົນ ໃຫ້ມີສ່ວນຮ່ວມໃນການພັດທະນາສັດນ້ຳ ຢ່າງກວ້າງຂວາງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງພັດທະນາພັນສັດນ້ຳ ຕ້ອງປະຕິບັດຕາມ ນະໂຍບາຍ, ວິທີການ, ລະບຽບການ ແລະ ມາດຕະຖານເຕັກນິກ ທີ່ຂະແໜງການກະສິກຳ ແລະ ປ່າໄມ້ ກຳນົດ.

## ໝວດທີ 4
## ການນຳໃຊ້ສັດນ້ຳ

**ມາດຕາ 34 (ປັບປຸງ) ປະເພດ ການນຳໃຊ້ສັດນ້ຳ**

ການນຳໃຊ້ສັດນ້ຳ ມີ ສີ່ປະເພດ ດັ່ງນີ້:

1. ການນຳໃຊ້ເພື່ອສາທາລະນະປະໂຫຍດ;
2. ການນຳໃຊ້ເພື່ອຄອບຄົວ;
3. ການນຳໃຊ້ຕາມປະເພນີ;
4. ການນຳໃຊ້ເພື່ອທຸລະກິດ.

ການນຳໃຊ້ສັດນ້ຳທຸກປະເພດ ຕ້ອງຮັບປະກັນຄວາມຍືນຍົງ, ຄວາມສົມດຸນຂອງລະບົບນິເວດ ແລະ ບໍ່ໃຫ້ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.

**ມາດຕາ 35 (ປັບປຸງ) ການນຳໃຊ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳເອົາສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນສັດນ້ຳ ມາຮັບໃຊ້ຜົນປະໂຫຍດສ່ວນລວມ ເປັນຕົ້ນ ການສຶກສາຄົ້ນຄວ້າດ້ານວິທະຍາສາດ, ການທ່ອງທ່ຽວ, ການກິລາ, ການສະແດງ ແຕ່ຕ້ອງປະຕິບັດຕາມກົດໝາຍ.

ການນຳໃຊ້ສັດນ້ຳບັນຊີ I ເພື່ອສາທາລະນະປະໂຫຍດ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

ການນຳໃຊ້ສັດນ້ຳບັນຊີ II ເພື່ອສາທາລະນະປະໂຫຍດ ຕ້ອງຂໍອະນຸຍາດນຳພະແນກກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ການນຳໃຊ້ສັດນ້ຳບັນຊີ III ເພື່ອສາທາລະນະປະໂຫຍດ ສາມາດນຳໃຊ້ໄດ້ໂດຍບໍ່ຕ້ອງຂໍອະນຸຍາດ.

**ມາດຕາ 36 (ປັບປຸງ) ການນຳໃຊ້ເພື່ອຄອບຄົວ**

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳເອົາສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ບັນຊີ III ມານຳໃຊ້ເພື່ອ ບໍລິໂພກ, ເປັນຢາປົວພະຍາດ, ເອ້ຍ້ອງ ແລະ ອື່ນໆ ຕາມລະດູການ ແລະ ສະຖານທີ່ທີ່ອະນຸຍາດ, ນຳໃຊ້ວິທີການ ແລະ ເຄື່ອງມືທີ່ບໍ່ມີລັກສະນະທັບສູນ.

ສຳລັບການນຳໃຊ້ສັດນ້ຳບັນຊີ II ເພື່ອຄອບຄົວ ຕ້ອງຂໍອະນຸຍາດ ຕາມລະບຽບການ.

**ມາດຕາ 37 (ປັບປຸງ) ການນຳໃຊ້ຕາມປະເພນີ**

ການນຳໃຊ້ຕາມປະເພນີ ແມ່ນ ການນຳເອົາສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ບັນຊີ II ແລະ ບັນຊີ III ມານຳໃຊ້ເພື່ອຄວາມຈຳເປັນທາງດ້ານວັດທະນະທຳ ຫຼື ຄວາມເຊື່ອຖື ທີ່ເຄີຍປະຕິບັດກັນມາ ເປັນຕົ້ນ ປ່ອຍປາ, ປ່ອຍອ່ຽນ, ປ່ອຍກົບ.

**ມາດຕາ 38 (ປັບປຸງ) ການນຳໃຊ້ເພື່ອທຸລະກິດ**

ການນຳໃຊ້ເພື່ອທຸລະກິດ ແມ່ນ ການນຳເອົາສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ເພື່ອດຳເນີນທຸລະກິດ ເຊັ່ນ ພິພິທະພັນສັດນ້ຳ, ສວນສັດນ້ຳ, ຟາມສັດນ້ຳ, ການນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ແລະ ການສ້າງສາລະຄະດີສັດນ້ຳ.

ການນຳໃຊ້ເພື່ອທຸລະກິດ ຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ III
## ການປະມົງ
### ໝວດທີ 1
### ຮູບແບບການປະມົງ

**ມາດຕາ 39 ຮູບແບບການປະມົງ**

ການປະມົງ ມີ ສອງຮູບແບບ ດັ່ງນີ້:

1. ການປະມົງແບບຄອບຄົວ;
2. ການປະມົງແບບທຸລະກິດ.

**ມາດຕາ 40 ການປະມົງແບບຄອບຄົວ**

ການປະມົງແບບຄອບຄົວ ແມ່ນ ການລ້ຽງ, ການຫາ ແລະ ການປຸງແຕ່ງ ສັດນ້ຳ ໂດຍມີເປົ້າໝາຍເພື່ອຊົມໃຊ້ໃນຊີວິດປະຈຳວັນຂອງຄອບຄົວ ຊຶ່ງບໍ່ມີເປົ້າໝາຍເພື່ອຈຳໜ່າຍເປັນລາຍຮັບຕົ້ນຕໍ.

**ມາດຕາ 41 ການປະມົງແບບທຸລະກິດ**

ການປະມົງແບບທຸລະກິດ ແມ່ນ ການລ້ຽງ, ການຫາ ແລະ ການປຸງແຕ່ງ ສັດນ້ຳ ໂດຍມີເປົ້າໝາຍ ເພື່ອຈຳໜ່າຍເປັນລາຍຮັບຕົ້ນຕໍ.

### ໝວດທີ 2
### ການລ້ຽງສັດນ້ຳ

**ມາດຕາ 42 (ໃໝ່) ການລ້ຽງສັດນ້ຳ**

ການລ້ຽງສັດນ້ຳ ແມ່ນ ການນຳເອົາສັດນ້ຳມາລ້ຽງໃນສະຖານທີ່, ແຫຼ່ງນ້ຳ ຊຶ່ງຕ້ອງປະຕິບັດຕາມມາດຕະຖານເຕັກນິກ ໂດຍມີການນຳໃຊ້ແນວພັນສັດນ້ຳ, ອາຫານ ແລະ ມີການດູແລສຸຂະພາບສັດນ້ຳທີ່ດີ, ບໍ່ມີຜົນກະທົບຕໍ່ສັດນ້ຳ ແລະ ສະພາບແວດລ້ອມ ເພື່ອເຮັດໃຫ້ສັດນ້ຳ ມີສຸຂະພາບແຂງແຮງ, ຈະເລີນເຕີບໂຕ ແລະ ມີຜົນຜະລິດສູງ.

ສັດນ້ຳບັນຊີ I ທີ່ໄດ້ມາຈາກທຳມະຊາດ ຫຼື ຈາກບ່ອນອື່ນທີ່ບໍ່ໄດ້ຂະຫຍາຍພັນ ບໍ່ອະນຸຍາດໃຫ້ລ້ຽງຢ່າງເດັດຂາດ, ເວັ້ນເສຍແຕ່ກໍລະນີຈຳເປັນ ເພື່ອການສຶກສາຄົ້ນຄວ້າ ແລະ ການຂະຫຍາຍພັນທີ່ບໍ່ແມ່ນຈຸດປະສົງທາງການຄ້າ.

ສັດນ້ຳບັນຊີ II ອະນຸຍາດໃຫ້ລ້ຽງ ເພື່ອການສຶກສາຄົ້ນຄວ້າ ແລະ ການຂະຫຍາຍພັນ. ໃນກໍລະນີສັດນ້ຳຊະນິດດັ່ງກ່າວ ຫາກໄດ້ມີການຂະຫຍາຍພັນແລ້ວ ເລີ່ມແຕ່ສາຍພັນ ຮຸ່ນ 1 ແລະ ຮຸ່ນຕໍ່ໄປ ອະນຸຍາດໃຫ້ລ້ຽງແບບຄອບຄົວ ແລະ ແບບທຸລະກິດ ຕາມກົດໝາຍ.

ສັດນ້ຳບັນຊີ III ອະນຸຍາດ ໃຫ້ລ້ຽງແບບຄອບຄົວ ແລະ ແບບທຸລະກິດ ຕາມກົດໝາຍ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດມາດຕະຖານເຕັກນິກ ກ່ຽວກັບການລ້ຽງສັດນ້ຳ.

## ມາດຕາ 43 (ໃໝ່) ການສຳຫຼວດກ່ຽວກັບການລ້ຽງສັດນ້ຳ

ການສຳຫຼວດກ່ຽວກັບການລ້ຽງສັດນ້ຳ ແມ່ນ ການເກັບກຳຂໍ້ມູນ ກ່ຽວກັບສະຖານທີ່, ເນື້ອທີ່ການລ້ຽງ, ຊະນິດພັນສັດນ້ຳ, ຮູບແບບ, ວິທີການລ້ຽງ, ຜົນຜະລິດ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການສຳຫຼວດການລ້ຽງສັດນ້ຳ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອສະໜອງໃຫ້ແກ່ການວາງແຜນພັດທະນາການລ້ຽງສັດນ້ຳແຕ່ລະເຂດ ໃນແຕ່ລະໄລຍະ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສຳຫຼວດກ່ຽວກັບການລ້ຽງສັດນ້ຳ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ພາຍຫຼັງສຳເລັດການສຳຫຼວດ ຕ້ອງລາຍງານຜົນການສຳຫຼວດຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນເວລາ ສິບຫ້າວັນ.

## ມາດຕາ 44 (ໃໝ່) ການກຳນົດເຂດລ້ຽງສັດນ້ຳ

ເຂດລ້ຽງສັດນ້ຳ ແມ່ນ ສະຖານທີ່ ຫຼື ແຫຼ່ງນ້ຳທີ່ເປັນບ່ອນລ້ຽງສັດນ້ຳ ຊຶ່ງກຳນົດຂຶ້ນບົນພື້ນຖານຂໍ້ມູນຕົວຈິງທີ່ໄດ້ຈາກການສຳຫຼວດ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດເຂດລ້ຽງສັດນ້ຳເປັນແຕ່ລະໄລຍະ ພ້ອມທັງແຈ້ງເຂດລ້ຽງສັດນ້ຳ ໃຫ້ຜູ້ທີ່ມີຈຸດປະສົງລ້ຽງສັດນ້ຳຊາບ.

## ມາດຕາ 45 (ໃໝ່) ແນວພັນສັດນ້ຳ

ແນວພັນສັດນ້ຳ ແມ່ນ ພໍ່ພັນ, ແມ່ພັນ, ນ້ຳເຊື້ອ, ໄຂ່ເຊື້ອ ແລະ ໂຕອ່ອນ ຂອງສັດນ້ຳ ທີ່ມີລັກສະນະທາງພັນທຸກຳທີ່ເດັ່ນ ທີ່ຖືກຢັ້ງຢືນແຫຼ່ງກຳເນີດ ຫຼື ໄດ້ຮັບການຂຶ້ນທະບຽນ ຕາມລະບຽບການ ເພື່ອນຳໃຊ້ເຂົ້າໃນການຂະຫຍາຍພັນສັດນ້ຳ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການຄຸ້ມຄອງ ແລະ ພັດທະນາແນວພັນສັດນ້ຳ ເປັນຕົ້ນການຂຶ້ນທະບຽນແນວພັນສັດນ້ຳ, ການສືບຢ້ອນຫຼັງປະຫວັດສັດນ້ຳ ເພື່ອນຳໃຊ້ແນວພັນສັດນ້ຳ ເຂົ້າໃນການລ້ຽງໃຫ້ມີຜົນຜະລິດສູງ ແລະ ຍືນຍົງ.

## ມາດຕາ 46 (ໃໝ່) ການຂຶ້ນທະບຽນແນວພັນສັດນ້ຳ

ການຂຶ້ນທະບຽນແນວພັນສັດນ້ຳ ແມ່ນ ຂະບວນການຢັ້ງຢືນ ແລະ ຮັບຮອງ ແນວພັນສັດນ້ຳ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້.

ແນວພັນສັດນ້ຳ ທີ່ໄດ້ຈາກການຄົ້ນຄວ້າ, ທົດລອງ ແລະ ນຳເຂົ້າ ເພື່ອຈຳໜ່າຍ ແລະ ນຳໃຊ້ເຂົ້າໃນການລ້ຽງ ຕ້ອງໄດ້ຂຶ້ນທະບຽນແນວພັນສັດນ້ຳ ນຳກະຊວງກະສິກຳ ແລະ ປ່າໄມ້.

ຂັ້ນຕອນ ແລະ ວິທີການ ຂຶ້ນທະບຽນແນວພັນສັດນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 47 (ໃໝ່) ແນວພັນສັດນ້ຳທີ່ຍົກເວັ້ນການຂຶ້ນທະບຽນ**

ແນວພັນສັດນ້ຳ ທີ່ຍົກເວັ້ນການຂຶ້ນທະບຽນ ມີ ດັ່ງນີ້:

1. ແນວພັນສັດນ້ຳ ທີ່ສົ່ງອອກຄືນ, ສົ່ງຜ່ານ ຫຼື ນຳເຂົ້າ ເພື່ອຜະລິດແລ້ວສົ່ງອອກຕາມສັນຍາລົງທຶນລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ;

2. ແນວພັນສັດນ້ຳ ທີ່ນຳເຂົ້າເພື່ອການ ຄົ້ນຄວ້າ, ທົດລອງ, ສາທິດ, ທົດສອບ, ວາງສະແດງ, ຊ່ວຍເຫຼືອ, ເປັນຂອງຂວັນ, ແລກປ່ຽນ ຫຼື ກິດຈະການອື່ນຂອງລັດ.

ແນວພັນສັດນ້ຳທີ່ຍົກເວັ້ນການຂຶ້ນທະບຽນ ກ່ອນຈະນຳເຂົ້ານັ້ນ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 48 (ໃໝ່) ອາຫານສັດນ້ຳ**

ອາຫານສັດນ້ຳ ແມ່ນ ສິ່ງທີ່ສັດນ້ຳສາມາດກິນໄດ້ ຊຶ່ງເປັນສິ່ງທີ່ຖືກປຸງແຕ່ງ ແບບສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງ ທີ່ສາມາດນຳໃຊ້ເຂົ້າໃນການລ້ຽງສັດນ້ຳ ເພື່ອໃຫ້ໄດ້ຜົນຜະລິດຕາມຄວາມຕ້ອງການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ອາຫານສັດນ້ຳ ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 49 (ໃໝ່) ອຸປະກອນລ້ຽງສັດນ້ຳ**

ອຸປະກອນລ້ຽງສັດນ້ຳ ແມ່ນ ອຸປະກອນທີ່ນຳໃຊ້ເຂົ້າໃນການລ້ຽງ ແລະ ການຂະຫຍາຍພັນສັດນ້ຳ ເຊັ່ນ ເຄື່ອງປະສົມອາຫານ, ເຄື່ອງໃຫ້ອາຫານ, ເຄື່ອງມືສຳລັບການປະສົມພັນ, ເຄື່ອງຟັກໄຂ່, ເຄື່ອງອະນຸບານ, ກະຊັງ, ເຄື່ອງກວດກາຄຸນນະພາບນ້ຳ, ເຄື່ອງປັ່ນນ້ຳ, ເຄື່ອງຕອງນ້ຳ, ປໍ້າລົມ ແລະ ຜະລິດຕະພັນການສັດຕະວະແພດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ອຸປະກອນລ້ຽງສັດນ້ຳ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ປະຕິບັດຕາມກົດໝາຍ.

## ໝວດທີ 3
## ການຫາສັດນ້ຳ

**ມາດຕາ 50 (ໃໝ່) ການຫາສັດນ້ຳ**

ການຫາສັດນ້ຳ ແມ່ນ ການຈັບ ຫຼື ການດັກເອົາສັດນ້ຳ ທຳມະຊາດ ດ້ວຍການນຳໃຊ້ເຄື່ອງມື ແລະ ວິທີການຕ່າງໆ.

ການຫາສັດນ້ຳ ໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

1. ສັດນ້ຳບັນຊີ I ບໍ່ອະນຸຍາດໃຫ້ຫາຢ່າງເດັດຂາດ ເວັ້ນເສຍແຕ່ກໍລະນີຈຳເປັນ ເພື່ອການສຶກສາຄົ້ນຄວ້າ ແລະ ການຂະຫຍາຍພັນທີ່ບໍ່ແມ່ນຈຸດປະສົງທາງການຄ້າ ແຕ່ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້;

2. ສັດນ້ຳບັນຊີ II ອະນຸຍາດໃຫ້ຫາ ຕາມການກຳນົດຂອງຂະແໜງການກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ;

3. ສັດນ້ຳບັນຊີ III ອະນຸຍາດໃຫ້ຫາ ຍົກເວັ້ນລະດູວາງໄຂ່.

**ມາດຕາ 51 (ໃໝ່) ການສຳຫຼວດກ່ຽວກັບການຫາສັດນ້ຳ**

ການສຳຫຼວດກ່ຽວກັບການຫາສັດນ້ຳ ແມ່ນ ການເກັບກຳຂໍ້ມູນກ່ຽວກັບພື້ນທີ່ແຫຼ່ງນ້ຳ, ຊະນິດສັດນ້ຳ, ວິທີການຫາ, ອຸປະກອນ, ແຫຼ່ງທີ່ຢູ່ອາໄສ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການສຳຫຼວດກ່ຽວກັບການຫາສັດນ້ຳ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອສ້າງເປັນຖານຂໍ້ມູນ ແລະ ສະໜອງຂໍ້ມູນ ໃຫ້ແກ່ການວາງແຜນຄຸ້ມຄອງການຫາສັດນ້ຳ ແຕ່ລະເຂດໃນແຕ່ລະໄລຍະ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສຳຫຼວດກ່ຽວກັບການຫາສັດນ້ຳ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ພາຍຫຼັງສຳເລັດການສຳຫຼວດ ຕ້ອງລາຍງານຜົນການສຳຫຼວດຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນເວລາ ສິບຫ້າວັນ.

**ມາດຕາ 52 (ໃໝ່) ການກຳນົດເຂດບໍ່ອະນຸຍາດໃຫ້ຫາສັດນ້ຳ**

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດເຂດບໍ່ອະນຸຍາດໃຫ້ຫາສັດນ້ຳ ເປັນຕົ້ນ ວັງສະຫງວນ, ເຂດປາອໍ, ແຫຼ່ງສັດນ້ຳວາງໄຂ່, ເຂດຈະເລີນເຕີບໂຕຂອງລູກປາໄວອ່ອນ.

**ມາດຕາ 53 (ໃໝ່) ເຄື່ອງມືຫາສັດນ້ຳ**

ເຄື່ອງມືຫາສັດນ້ຳ ແມ່ນ ອຸປະກອນທີ່ນຳໃຊ້ໃນການຈັບ, ດັກ ສັດນ້ຳ ເຊັ່ນ ເບັດ, ແຫ, ມອງ, ກະດູ້ງ, ຕຸ້ມ, ລັນ, ລອບ, ສຸ່ມ, ອວນ, ເຄື່ອງຄົ້ນຫາສັດນ້ຳ ແລະ ເຄື່ອງດູດສັດນ້ຳ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຜະລິດ, ນຳໃຊ້, ນຳເຂົ້າ ແລະ ຈຳໜ່າຍ ອວນ, ເຄື່ອງຄົ້ນຫາສັດນ້ຳ, ເຄື່ອງດູດສັດນ້ຳ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້.

ການນຳໃຊ້ເຄື່ອງມືຫາສັດນ້ຳ ຕ້ອງຮັບປະກັນໃຫ້ສັດນ້ຳສາມາດຂະຫຍາຍພັນແບບຍືນຍົງ, ບໍ່ອະນຸຍາດໃຫ້ນຳໃຊ້ເຄື່ອງມື ແລະ ວິທີການຫາສັດນ້ຳ ແບບກັບສູນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການກ່ຽວກັບເຄື່ອງມືຫາສັດນ້ຳ.

**ມາດຕາ 54 (ໃໝ່) ເຮືອປະມົງ**

ເຮືອປະມົງ ແມ່ນ ພາຫະນະທາງນ້ຳທີ່ມີເຄື່ອງຈັກ ທຸກປະເພດ ທີ່ນຳໃຊ້ໃນການຫາ, ບັນທຸກ, ເກັບກູ້, ຂົນສົ່ງ ຫຼື ເກັບຮັກສາ ສັດນ້ຳຂອງຊາວປະມົງ. ເຮືອປະມົງ ຕ້ອງມີຄຸນນະພາບດີ, ມີອຸປະກອນຮັກສາຄວາມປອດໄພ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ.

ເຮືອປະມົງ ຕ້ອງໄດ້ຂຶ້ນທະບຽນນຳຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ໄດ້ຮັບອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 55 (ໃໝ່) ຊາວປະມົງ**

ຊາວປະມົງ ແມ່ນ ຜູ້ປະກອບອາຊີບໃນການຫາສັດນ້ຳ ແລະ ມີລາຍຮັບຕົ້ນຕໍຈາກການຫາສັດນ້ຳ ທີ່ໄດ້ຂຶ້ນບັນຊີເປັນຊາວປະມົງ.

ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ຂຶ້ນບັນຊີຊາວປະມົງ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດຂັ້ນຕອນ ແລະ ເງື່ອນໄຂໃນການຂຶ້ນບັນຊີຊາວປະມົງ.

## ໝວດທີ 4
## ການປຸງແຕ່ງສັດນ້ຳ

**ມາດຕາ 56 (ໃໝ່) ການປຸງແຕ່ງສັດນ້ຳ**

ການປຸງແຕ່ງສັດນ້ຳ ແມ່ນ ຂະບວນການແປຮູບສັດນ້ຳ ດ້ວຍກຳມະວິທີຕ່າງໆ ໂດຍນຳໃຊ້ເຄື່ອງຈັກ ຫຼື ແຮງງານຄົນ ເພື່ອປ່ຽນສະພາບຂອງສັດນ້ຳໄປສູ່ຜະລິດຕະພັນສັດນ້ຳ.

ການປຸງແຕ່ງສັດນ້ຳ ຕ້ອງປະຕິບັດຕາມມາດຕະຖານປຸງແຕ່ງສັດນ້ຳ ແລະ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດມາດຕະຖານປຸງແຕ່ງສັດນ້ຳ.

**ມາດຕາ 57 (ໃໝ່) ມາດຕະຖານດ້ານສຸຂານາໄມ**

ມາດຕະຖານດ້ານສຸຂານາໄມ ແມ່ນ ມາດຕະການຕ່າງໆ ທີ່ນໍາໃຊ້ໃນການປຸງແຕ່ງສັດນໍ້າ ເພື່ອໃຫ້ຜະລິດຕະພັນສັດນໍ້າ ມີຄວາມສະອາດ, ປອດໄພ, ບໍ່ປົນເປື້ອນຈາກເຊື້ອພະຍາດ ແລະ ເຄມີອັນຕະລາຍ.

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ກໍານົດມາດຕະຖານດ້ານສຸຂານາໄມ ໂດຍສອດຄ່ອງກັບມາດຕະຖານດ້ານສຸຂານາໄມ ທີ່ອົງການຈັດຕັ້ງສາກົນກໍານົດ.

**ມາດຕາ 58 (ໃໝ່) ການບັນຈຸ, ຕິດສະຫຼາກ ແລະ ຫຸ້ມຫໍ່ ຜະລິດຕະພັນສັດນໍ້າ**

ຜະລິດຕະພັນສັດນໍ້າ ຕ້ອງບັນຈຸໃສ່ພາຊະນະທີ່ມີຄຸນນະພາບ ແລະ ຄວາມປອດໄພ, ບໍ່ເຮັດໃຫ້ຜະລິດຕະພັນສັດນໍ້າເສື່ອມຄຸນໄວ, ມີສານປົນເປື້ອນ ແລະ ນໍາໃຊ້ສະເພາະແຕ່ລະຊະນິດເທົ່ານັ້ນ.

ຜະລິດຕະພັນສັດນໍ້າ ຕ້ອງມີສະຫຼາກທີ່ບົ່ງບອກຂໍ້ມູນລະອຽດກ່ຽວກັບຜະລິດຕະພັນສັດນໍ້າ ຢ່າງຖືກຕ້ອງ ແລະ ຊັດເຈນ.

ການຫຸ້ມຫໍ່ຜະລິດຕະພັນສັດນໍ້າ ຕ້ອງປະຕິບັດຕາມມາດຕະຖານດ້ານສຸຂານາໄມ ແລະ ນໍາໃຊ້ວັດສະດຸທີ່ຖືກກັບຄຸນລັກສະນະຂອງຜະລິດຕະພັນສັດນໍ້າ ແຕ່ລະຊະນິດ, ຮັບປະກັນຄຸນນະພາບ ແລະ ຄວາມປອດໄພ.

**ມາດຕາ 59 (ໃໝ່) ການເກັບຮັກສາ ແລະ ຂົນສົ່ງ ຜະລິດຕະພັນສັດນໍ້າ**

ການເກັບຮັກສາ ແລະ ຂົນສົ່ງ ຜະລິດຕະພັນສັດນໍ້າ ຕ້ອງປະຕິບັດຕາມເງື່ອນໄຂຂອງຜະລິດຕະພັນສັດນໍ້າ ແຕ່ລະຊະນິດ, ຫຼັກການເກັບຮັກສາ ແລະ ຂົນສົ່ງທີ່ດີ ເພື່ອຮັບປະກັນຄວາມປອດໄພ ຂອງຜະລິດຕະພັນສັດນໍ້າ.

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ກໍານົດມາດຕະຖານການເກັບຮັກສາ ແລະ ຂົນສົ່ງ ຜະລິດຕະພັນສັດນໍ້າ.

## ໝວດທີ 5
## ການເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມ ພະຍາດສັດນໍ້າ

**ມາດຕາ 60 (ໃໝ່) ການເຝົ້າລະວັງພະຍາດສັດນໍ້າ**

ການເຝົ້າລະວັງພະຍາດສັດນໍ້າ ແມ່ນ ການຕິດຕາມ, ເກັບກໍາ ແລະ ວິເຄາະຂໍ້ມູນ ຂ່າວສານ ກ່ຽວກັບສຸຂະພາບ ແລະ ພະຍາດສັດນໍ້າ ຢ່າງເປັນລະບົບ ລວມທັງການລາຍງານ ແລະ ແຈ້ງຂໍ້ມູນ ຂ່າວສານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອດໍາເນີນການປ້ອງກັນ ແລະ ຄວບຄຸມພະຍາດ ໃຫ້ທັນການ.

ຂະແໜງການກະສິກໍາ ແລະ ປ່າໄມ້ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດໍາເນີນການເຝົ້າລະວັງພະຍາດສັດນໍ້າ ໃຫ້ມີປະສິດທິຜົນ.

ກະຊວງກະສິກໍາ ແລະ ປ່າໄມ້ ສ້າງແຜນເຝົ້າລະວັງ ແລະ ຄູ່ມືແນະນໍາການເຝົ້າລະວັງພະຍາດສັດນໍ້າທີ່ຈໍາເປັນຕ້ອງແຈ້ງ ແຕ່ລະປະເພດ.

**ມາດຕາ 61 (ໃໝ່) ການປ້ອງກັນພະຍາດສັດນໍ້າ**

ການປ້ອງກັນພະຍາດສັດນໍ້າ ແມ່ນ ການກໍານົດແຜນການ ແລະ ມາດຕະການດ້ານວິຊາການ ກ່ອນການເກີດພະຍາດ ເພື່ອກັນ ແລະ ຫຼຸດຜ່ອນປັດໄຈສ່ຽງ ທີ່ຈະພາໃຫ້ເກີດພະຍາດສັດນໍ້າ ເປັນຕົ້ນ ການອະນາໄມຂ້າເຊື້ອ ໜອງ, ອ່າງ, ພາຊະນະບັນຈຸ, ອຸປະກອນ, ຜູ້ລ້ຽງສັດນໍ້າ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລ້ຽງສັດນໍ້າ ຕ້ອງດໍາເນີນການປ້ອງກັນພະຍາດສັດນໍ້າຢ່າງເປັນປົກກະຕິຕາມການແນະນໍາຂອງຂະແໜງການກະສິກໍາ ແລະ ປ່າໄມ້.

## ມາດຕາ 62 (ໃໝ່) ພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ

ພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ແມ່ນ ພະຍາດສັດນ້ຳຮ້າຍແຮງ ທີ່ສາມາດຕິດຕໍ່ຈາກສັດນ້ຳສູ່ສັດນ້ຳ, ສັດນ້ຳສູ່ສັດບົກ ຫຼື ຈາກສັດນ້ຳສູ່ຄົນ ຊຶ່ງມີການແຜ່ລາມໄວ, ສ້າງຜົນກະທົບທາງລົບ ຕໍ່ ຊີວິດ, ສຸຂະພາບ ຂອງ ສັດ ແລະ ຄົນ, ເສດຖະກິດ ແລະ ສັງຄົມ.

ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງກຳນົດບັນຊີພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ບົນພື້ນຖານບັນຊີພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຂອງອົງການສຸຂະພາບສັດສາກົນ ແລ້ວປະກາດໃຫ້ສາທາລະນະຊົນ ໃນແຕ່ລະໄລຍະ.

## ມາດຕາ 63 (ໃໝ່) ການລາຍງານພະຍາດສັດນ້ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພົບເຫັນ ຫຼື ສົງໄສ ສັດນ້ຳ ຕິດພະຍາດທີ່ຈຳເປັນຕ້ອງແຈ້ງ ຫຼື ຕາຍເປັນຈຳນວນຫຼາຍ ໃນໄລຍະເວລາທີ່ໃກ້ຄຽງກັນ ຕ້ອງລາຍງານ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນເວລາ ຊາວສີ່ຊົ່ວໂມງ.

ໃນກໍລະນີໄດ້ຮັບການຢັ້ງຢືນ ການພົບເຊື້ອພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງແລ້ວ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງອອກແຈ້ງການ ຢ່າງເປັນລາຍລັກອັກສອນ ໃຫ້ແກ່ສາທາລະນະຊົນ ແລະ ລາຍງານຕໍ່ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ. ໃນກໍລະນີພະຍາດສັດນ້ຳຕິດຕໍ່ຈາກສັດນ້ຳສູ່ຄົນ ກໍຕ້ອງແຈ້ງໃຫ້ຂະແໜງການສາທາລະນະສຸກ ພາຍໃນເວລາ ຊາວສີ່ຊົ່ວໂມງ.

ໃນກໍລະນີກວດພົບ ຫຼື ຢັ້ງຢືນ ສາເຫດການຕາຍຂອງສັດນ້ຳຈຳນວນຫຼາຍທີ່ບໍ່ແມ່ນພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງແຈ້ງໃຫ້ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອແກ້ໄຂ.

## ມາດຕາ 64 (ໃໝ່) ການປະກາດ ແລະ ການຍົກເລີກ ເຂດລະບາດພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ

ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ເປັນຜູ້ປະກາດ ແລະ ຍົກເລີກ ເຂດລະບາດພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຕາມການສະເໜີຂອງຂະແໜງການກະສິກຳ ແລະ ປ່າໄມ້ ແຕ່ລະຂັ້ນ ຕາມກໍລະນີ ດັ່ງນີ້:

1. ຖ້າພະຍາດລະບາດເກີດຂຶ້ນໃນຂອບເຂດ ເມືອງ, ເທດສະບານ, ນະຄອນ ໃດໜຶ່ງ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ນັ້ນ ເປັນຜູ້ປະກາດ ແລະ ຍົກເລີກ;
2. ຖ້າພະຍາດລະບາດເກີດຂຶ້ນຫຼາຍກວ່າໜຶ່ງ ເມືອງ, ເທດສະບານ, ນະຄອນ ແຕ່ຢູ່ໃນຂອບເຂດແຂວງໃດໜຶ່ງ ຫຼື ນະຄອນຫຼວງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ນັ້ນ ເປັນຜູ້ປະກາດ ແລະ ຍົກເລີກ;
3. ຖ້າພະຍາດລະບາດເກີດຂຶ້ນຫຼາຍກວ່າໜຶ່ງແຂວງ ໃຫ້ ນາຍົກລັດຖະມົນຕີ ເປັນຜູ້ປະກາດ ແລະ ຍົກເລີກ.

ໃນການປະກາດເປັນເຂດລະບາດພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງນັ້ນ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງກຳນົດຂອບເຂດຂອງການຄວບຄຸມ ແລະ ເຝົ້າລະວັງໃຫ້ຈະແຈ້ງ, ແຕ່ງຕັ້ງຄະນະສະເພາະກິດ ເພື່ອຄວບຄຸມການລະບາດ ແລະ ວາງມາດຕະການແກ້ໄຂ ລວມທັງແຈ້ງເຕືອນບໍ່ໃຫ້ມີການເຄື່ອນຍ້າຍສັດນ້ຳ, ຊາກ, ຊີ້ນສ່ວນ ແລະ ຜະລິດຕະພັນສັດນ້ຳ ເຂົ້າ, ອອກ ຫຼື ຜ່ານເຂດດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ.

ເຂດລະບາດພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຈະຖືກຍົກເລີກໄດ້ ກໍຕໍ່ເມື່ອຂະແໜງການກະສິກຳ ແລະ ປ່າໄມ້ ຫາກໄດ້ນຳໃຊ້ມາດຕະການຄວບຄຸມ ແລະ ແກ້ໄຂແລ້ວ ແລະ ໝັ້ນໃຈວ່າການລະບາດດັ່ງກ່າວໄດ້ສະຫງົບລົງແລ້ວ ຈຶ່ງສະເໜີໃຫ້ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ພິຈາລະນາປະກາດຍົກເລີກເຂດລະບາດພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ.

## ມາດຕາ 65 (ໃໝ່) ການຄວບຄຸມພະຍາດສັດນ້ຳ

ການຄວບຄຸມພະຍາດສັດນ້ຳ ແມ່ນ ການຈຳກັດພະຍາດທີ່ພວມເກີດຂຶ້ນ ບໍ່ໃຫ້ແຜ່ລາມອອກສູ່ວົງກວ້າງ ແລະ ມີຜົນກະທົບຮ້າຍແຮງ ຕໍ່ ຊີວິດ, ສຸຂະພາບຂອງ ສັດ ແລະ ຄົນ, ຊັບສິນຂອງລັດ, ລວມໝູ່ ແລະ ຂອງປະຊາຊົນ.

ໃນກໍລະນີເກີດການລະບາດຂອງພະຍາດສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ນຳໃຊ້ມາດຕະການ ເພື່ອໂຕ້ຕອບການລະບາດ ດັ່ງນີ້:

1. ທຳລາຍສັດນ້ຳ ທີ່ຢັ້ງຢືນວ່າຕິດເຊື້ອພະຍາດສັດນ້ຳ;

2. ກັກ ຫຼື ທຳລາຍ ຊາກສັດນ້ຳ, ຜະລິດຕະພັນສັດນ້ຳ, ສິ່ງເສດເຫຼືອ ຫຼື ວັດຖຸປະກອນ ຕ່າງໆທີ່ມີຄວາມສ່ຽງ ຈະນຳເອົາເຊື້ອພະຍາດແຜ່ລາມໄປສູ່ເຂດອື່ນ;

3. ອະນາໄມ ແລະ ຂ້າເຊື້ອພະຍາດ ໃນນ້ຳ, ດິນພື້ນນ້ຳ ແລະ ວັດຖຸປະກອນ ທີ່ປົນເປື້ອນ ດ້ວຍເຊື້ອພະຍາດ;

4. ແຈ້ງເຕືອນ ແລະ ຄວບຄຸມ ການເຄື່ອນຍ້າຍ ພາຫະນຳເຊື້ອພະຍາດ ເປັນຕົ້ນ ຄົນ, ສັດນ້ຳ ແລະ ພາຫະນະຂົນສົ່ງຜະລິດຕະພັນສັດນ້ຳ ເຂົ້າ-ອອກ ເຂດທີ່ເກີດການລະບາດ;

5. ງົດການຂະຫຍາຍພັນສັດນ້ຳ ຢູ່ໃນເຂດທີ່ກຳລັງເກີດການລະບາດ;

6. ໃຫ້ຢາ ຫຼື ສານເຄມີ ເພື່ອປ້ອງກັນພະຍາດສັດນ້ຳ ໃນເຂດໃກ້ຄຽງ;

7. ເຝົ້າລະວັງພະຍາດ ແລະ ນຳໃຊ້ມາດຕະການດ້ານສຸຂານາໄມ ໃດໜຶ່ງ ໂດຍອີງຕາມການວິເຄາະຄວາມສ່ຽງ ໃນເຂດທີ່ເກີດການລະບາດ ເພື່ອຮັບປະກັນ ໃຫ້ການລະບາດຂອງພະຍາດສະຫງົບລົງ;

8. ຈັດຕັ້ງການໂຄສະນາ, ສຶກສາອົບຮົມ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຮັບຮູ້ ແລະ ເຂົ້າຮ່ວມໃນການກັນ ແລະ ຄວບຄຸມພະຍາດ.

ໃນກໍລະນີມີການນຳໃຊ້ຢາ ຫຼື ສານເຄມີ ເພື່ອຄວບຄຸມ ພະຍາດສັດນ້ຳທີ່ຈຳເປັນຕ້ອງແຈ້ງ ຕ້ອງປະຕິບັດຕາມຄຳແນະນຳຂອງຂະແໜງການກະສິກຳ ແລະ ປ່າໄມ້.

## ພາກທີ IV
## ການຄົ້ນຄວ້າ, ການວິໄຈ ແລະ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ

### ມາດຕາ 66 (ໃໝ່) ການຄົ້ນຄວ້າກ່ຽວກັບສັດນ້ຳ ແລະ ການປະມົງ

ການຄົ້ນຄວ້າກ່ຽວກັບສັດນ້ຳ ແລະ ການປະມົງ ແມ່ນ ການສຶກສາ, ຄົ້ນຄວ້າ ແລະ ທົດລອງດ້ານວິທະຍາສາດກ່ຽວກັບການຂະຫຍາຍພັນ, ສືບພັນ, ພັນທຸກຳ, ການຈະເລີນເຕີບໂຕ, ລະບົບນິເວດ, ຄຸນປະໂຫຍດ, ການລ້ຽງ, ການຫາ, ການປຸງແຕ່ງ, ການກັນ ແລະ ຄວບຄຸມພະຍາດສັດນ້ຳ ລວມທັງການຊອກຫາຮູບແບບ ແລະ ມາດຕະຖານເຕັກນິກທີ່ເໝາະສົມ ເພື່ອນຳໃຊ້ເຂົ້າໃນວຽກງານສັດນ້ຳ ແລະ ການປະມົງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນການ ສຶກສາ, ຄົ້ນຄວ້າ ແລະ ທົດລອງ ກ່ຽວກັບສັດນ້ຳ ແລະ ການປະມົງ ພ້ອມທັງລົງທຶນສ້າງສະຖາບັນ ຫຼື ສູນຄົ້ນຄວ້າທົດລອງ ຕາມການອະນຸຍາດຂອງຂະແໜງການທີ່ກ່ຽວຂ້ອງ ແລະ ປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ການນຳເອົາຕົວຢ່າງສັດນ້ຳ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ໄປຄົ້ນຄວ້າຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້. ພາຍຫຼັງສຳເລັດການຄົ້ນຄວ້າແລ້ວ ຕ້ອງສົ່ງຜົນການຄົ້ນຄວ້າໃຫ້ກະຊວງກະສິກຳ ແລະ ປ່າໄມ້ ພາຍໃນເວລາ ສິບຫ້າວັນ.

### ມາດຕາ 67 (ໃໝ່) ການວິໄຈກ່ຽວກັບສັດນ້ຳ ແລະ ການປະມົງ

ການວິໄຈກ່ຽວກັບສັດນ້ຳ ແລະ ການປະມົງ ແມ່ນ ການນຳໃຊ້ວິທີການທາງດ້ານວິທະຍາສາດຂອງຫ້ອງວິໄຈ ເພື່ອກວດກາ ແລະ ຢັ້ງຢືນຄຸນນະພາບ, ຄວາມປອດໄພຂອງ ຜະລິດຕະພັນສິນຄ້າກ່ຽວກັບການປະມົງ ລວມທັງການວິໄຈນ້ຳ, ດິນພື້ນນ້ຳ ແລະ ພະຍາດສັດນ້ຳ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການພັດທະນາໂຄງລ່າງພື້ນຖານ, ວັດຖຸ, ເຕັກນິກ ລວມທັງ ບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກ ສຳລັບການວິໄຈ ໃຫ້ໄດ້ມາດຕະຖານສາກົນ ພ້ອມທັງກຳນົດຫ້ອງວິໄຈ ຫຼື ຮັບຮູ້ຫ້ອງວິໄຈຢູ່ຕ່າງປະເທດ ເພື່ອໃຫ້ເປັນຫ້ອງວິໄຈອ້າງອີງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນການວິໄຈ ຫຼື ສ້າງຫ້ອງວິໄຈ ກ່ຽວກັບສັດນ້ຳ ແລະ ການປະມົງ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 68 (ໃໝ່) ການວິໄຈອາຫານສັດນ້ຳ**

ການວິໄຈອາຫານສັດນ້ຳ ແມ່ນ ການນຳໃຊ້ວິທີການທາງດ້ານວິທະຍາສາດຂອງຫ້ອງວິໄຈ ເພື່ອກວດກາ ແລະ ຢັ້ງຢືນຄຸນນະພາບ, ຄວາມປອດໄພຂອງອາຫານສັດນ້ຳ ກ່ຽວກັບໂປຣຕີນ, ເຍື່ອໄຍ, ໄຂມັນ, ແຮ່ທາດ, ວິຕາມິນ, ເຖົ່າ, ພະລັງງານ, ຄວາມຊຸ່ມ, ອັດຕາການຍ່ອຍໄດ້ ຫຼື ດູດຊຶມ ແລະ ອື່ນໆ ລວມທັງການຊອກຄົ້ນຫາສານຕົກຄ້າງ, ສິ່ງປົນເປື້ອນ ແລະ ເຊື້ອພະຍາດ ທີ່ເປັນອັນຕະລາຍຢູ່ໃນອາຫານສັດນ້ຳ ແລະ ວັດຖຸດິບອາຫານສັດນ້ຳ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການພັດທະນາໂຄງລ່າງພື້ນຖານ, ວັດຖຸ, ເຕັກນິກ ລວມທັງ ບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກ ສຳລັບການວິໄຈອາຫານສັດນ້ຳ ເພື່ອຮັບປະກັນໃຫ້ອາຫານສັດນ້ຳໄດ້ມາດຕະຖານ, ມີຄຸນນະພາບ ແລະ ປອດໄພ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນການວິໄຈອາຫານສັດນ້ຳ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 69 (ໃໝ່) ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ**

ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ ແລະ ສະໜອງຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

ກະຊວງກະສິກຳ ແລະ ປ່າໄມ້ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ ລວມທັງ ການສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານດັ່ງກ່າວ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ປັບປຸງລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ ໃຫ້ເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານ ຂອງກະຊວງກະສິກຳ ແລະ ປ່າໄມ້ ລວມທັງ ສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານດັ່ງກ່າວ ຕາມຄວາມຮັບຜິດຊອບຂອງຕົນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນໃນລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຕາມການອະນຸຍາດຂອງຂະແໜງການກະສິກຳ ແລະ ປ່າໄມ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ V
## ທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ

**ມາດຕາ 70 (ໃໝ່) ການດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 71 (ໃໝ່) ປະເພດທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ**

ປະເພດທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ມີ ດັ່ງນີ້:

1. ຟາມສັດນ້ຳ, ຟາມພືດນ້ຳ;
2. ການຫາສັດນ້ຳ;
3. ການລ້ຽງສັດນ້ຳໃນອ່າງຮັບ ຫຼື ອ່າງເກັບນ້ຳ;

4. ການຜະລິດ ແລະ ຈຳໜ່າຍອຸປະກອນການປະມົງ;

5. ການຜະລິດ ແລະ ຈຳໜ່າຍ ອາຫານສັດນ້ຳ;

6. ໂຮງງານປຸງແຕ່ງສັດນ້ຳ ແລະ ສາງເຢັນ ສຳລັບເກັບຮັກສາ ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ;

7. ການຄ້າຂາຍ ສັດນ້ຳ ແລະ ຜະລິດຕະພັນສິນຄ້າກ່ຽວກັບການປະມົງ;

8. ການນຳເຂົ້າ, ສົ່ງອອກ ສັດນ້ຳ ແລະ ຜະລິດຕະພັນສິນຄ້າກ່ຽວກັບການປະມົງ;

9. ສວນສັດນ້ຳ;

10. ທີ່ປຶກສາກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

11. ໂຮງຮຽນວິຊາຊີບ ຫຼື ສູນຝຶກອົບຮົມທາງດ້ານການປະມົງ;

12. ທຸລະກິດອື່ນ ກ່ຽວກັບສັດນ້ຳ ແລະ ການປະມົງ.

ການແບ່ງຂັ້ນຄຸ້ມຄອງການອະນຸຍາດດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 72 (ປັບປຸງ) ເງື່ອນໄຂຂອງການດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ**

ການດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີເນື້ອທີ່, ທຶນ, ສິ່ງປຸກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ມີນັກວິຊາການທີ່ມີຄວາມຮູ້ດ້ານ ສັດນ້ຳ ຫຼື ການປະມົງ ລະດັບຊັ້ນກາງຂຶ້ນໄປ ທີ່ມີໃບຢັ້ງຢືນການຜ່ານການປະຕິບັດວຽກງານຕົວຈິງ ສຳລັບທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ;
5. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 73 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດ ຕາມແບບພິມທີ່ ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 74 (ໃໝ່) ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດ**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບສັດນ້ຳ ແລະ ການປະມົງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນ ຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ຂັ້ນຕອນ, ເງື່ອນໄຂ ແລະ ເອກະສານປະກອບໃນການອະນຸຍາດດຳເນີນທຸລະກິດ ກ່ຽວກັບສັດນ້ຳ ແລະ ການປະມົງ.

**ມາດຕາ 75 (ໃໝ່) ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ມີອາຍຸການນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້. ໃບອະນຸຍາດດຳເນີນທຸລະກິດບໍ່ສາມາດໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້.

**ມາດຕາ 76 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມ ການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງເຈົ້າໜ້າທີ່ສັດນ້ຳ ແລະ ການປະມົງ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານສັດນ້ຳ ແລະ ການປະມົງ;
5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ອົງການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ;
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ;
7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 (ປັບປຸງ) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 78 (ປັບປຸງ) ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ຈະຖືກຖອນໃນກໍລະນີຜູ້ດຳເນີນທຸລະກິດບໍ່ປະຕິບັດຕາມຄຳສັ່ງໂຈະ. ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ.

## ພາກທີ VI
## ກຸ່ມ, ສະຫະກອນ ແລະ ສະມາຄົມ ກ່ຽວກັບສັດນ້ຳ ແລະ ການປະມົງ

**ມາດຕາ 79 (ໃໝ່) ການສ້າງຕັ້ງ ກຸ່ມ ແລະ ສະຫະກອນ ກ່ຽວກັບສັດນ້ຳ ແລະ ການປະມົງ**

ລັດ ສົ່ງເສີມການສ້າງຕັ້ງ ກຸ່ມ ແລະ ສະຫະກອນ ກ່ຽວກັບສັດນ້ຳ ແລະ ການປະມົງ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ ແລະ ສົ່ງເສີມ, ພັດທະນາການຜະລິດ, ການບໍລິການ ແລະ ການດຳເນີນທຸລະກິດໃຫ້ເຕີບໃຫຍ່, ເຂັ້ມແຂງ, ໝັ້ນຄົງ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນ.

ຂັ້ນຕອນການສ້າງຕັ້ງ, ສິດ ແລະ ໜ້າທີ່ ຂອງກຸ່ມ ແລະ ສະຫະກອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 80 (ປັບປຸງ) ການສ້າງຕັ້ງສະມາຄົມກ່ຽວກັບສັດນ້ຳ ແລະ ການປະມົງ**

ລັດ ອະນຸຍາດໃຫ້ສ້າງຕັ້ງສະມາຄົມກ່ຽວກັບສັດນ້ຳ ແລະ ການປະມົງ ເພື່ອສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະ ການປະມົງ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ບົນພື້ນຖານການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ.

ຂັ້ນຕອນການສ້າງຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຄົມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 81 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ນຳໃຊ້ທາດເບື່ອ, ລະເບີດ, ອາວຸດ, ເຄື່ອງໄຟຟ້າ, ຕື່ມ, ເຄື່ອງແສງ, ສຽງ ເພື່ອຫາ ຫຼື ຈັບສັດນ້ຳ ແບບດັບສູນ;

2. ນຳໃຊ້ເຄື່ອງມືຫາສັດນ້ຳ ທີ່ມີຄວາມສ່ຽງເຮັດໃຫ້ສັດນ້ຳສູນພັນ ເຊັ່ນ ອວນ, ລີ່, ມອງຕາຖີ່, ໂຕ່ງ, ລອບຂະໜາດໃຫຍ່ ແລະ ອື່ນໆ;

3. ຫາສັດນ້ຳ ຈາກແຫຼ່ງນ້ຳທຳມະຊາດ ດ້ວຍການ ຕັນທ້ວຍ, ໂສກ, ບຸ່ງ, ຄອງນ້ຳ, ຊຸດໜອງ ຫຼື ດູດໜອງທຳມະຊາດທີ່ມີນ້ຳຕະຫຼອດປີ;

4. ຮັບເອົາ, ຊື້ ຂາຍ, ຄອບຄອງ ຫຼື ຂົນສົ່ງ ສັດນ້ຳບັນຊີ I ໂດຍບໍ່ໄດ້ຮັບອະນຸຍາດ;

5. ສ້າງສິ່ງກີດຂວາງທາງເດີນ ຂອງສັດນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;

6. ລ້ຽງ ແລະ/ຫຼື ປ່ອຍສັດນ້ຳ ຕ່າງຖິ່ນທີ່ມີຄວາມສ່ຽງທຳລາຍສັດນ້ຳພື້ນເມືອງ ແລະ ລະບົບນິເວດ;

7. ປູກພືດນ້ຳ ທີ່ຈະເປັນການທຳລາຍ ລະບົບນິເວດ ຫຼື ແຫຼ່ງລ້ຽງສັດນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ;

8. ບຸກລຸກ ວັງສະຫງວນ ຫຼື ເຂດອະນຸລັກພັນສັດນ້ຳ, ເຂດປາອໍ, ແຫຼ່ງສັດນ້ຳວາງໄຂ່, ເຂດຈະເລີນເຕີບໂຕຂອງລູກສັດນ້ຳໄວອ່ອນ;

9. ຫາສັດນ້ຳ ໃນລະດູວາງໄຂ່;

10. ບໍລິໂພກ, ຊື້ ຂາຍ ສັດນ້ຳ ທີ່ ຕາຍໂດຍບໍ່ຮູ້ສາເຫດ, ເປັນພະຍາດ ຫຼື ປົນເປື້ອນສານເຄມີຕົກຄ້າງ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 82 (ໃໝ່) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ກ່ຽວກັບສັດນ້ຳ ແລະ ການປະມົງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍ ແລະ ຕາມການອະນຸຍາດ;

2. ໂອນ ຫຼື ມອບ ໃບອະນຸຍາດດຳເນີນທຸລະກິດໃຫ້ຜູ້ອື່ນນຳໃຊ້;

3. ຊື້ ຂາຍ, ຫາ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ຫຼື ເຄື່ອນຍ້າຍ ສັດນ້ຳ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບການປະມົງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

5. ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ວາຈາທີ່ບໍ່ເໝາະສົມ ຕໍ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

6. ປະຕິເສດຄວາມຮັບຜິດຊອບ, ຫຼົບຫຼີກ, ປົກເບື່ອນ ຫຼື ຊຸກເຊື່ອງ ຂອງກາງ;

7. ໃຫ້ສິນບົນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 83 (ປັບປຸງ) ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ສັດນໍ້າ ແລະ ການປະມົງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ສັດນໍ້າ ແລະ ການປະມົງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ;
3. ທວງເອົາ, ຂໍເອົາ, ຮັບເອົາສິນບົນ;
4. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ;
5. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;
6. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາ
## ວຽກງານສັດນໍ້າ ແລະ ການປະມົງ
## ໝວດທີ 1
## ການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ

**ມາດຕາ 84 (ປັບປຸງ) ອົງການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ**

ລັດຖະບານ ຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ.

ໃນກໍລະນີຈຳເປັນ ອາດຈະສ້າງຕັ້ງຄະນະກຳມະການຄຸ້ມຄອງສັດນໍ້າ ແລະ ການປະມົງ ປະຈຳພື້ນທີ່ແຫຼ່ງນໍ້າ ຂຶ້ນກໍໄດ້ ຕາມການຕົກລົງຂອງຂະແໜງການກະສິກຳ ແລະ ປ່າໄມ້.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 85 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານສັດນໍ້າ ແລະ ການປະມົງ ເພື່ອສະເໜີລັດຖະບານພິຈາລະນາ;
2. ຫັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ເປັນລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັດນໍ້າ ແລະ ການປະມົງ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັດນໍ້າ ແລະ ການປະມົງ ໃຫ້ສັງຄົມ ແລະ ປະຊາຊົນ ຢ່າງກວ້າງຂວາງ ແລະ ທົ່ວເຖິງ;
4. ຄຸ້ມຄອງ, ຮັບຮອງ ບັນຊີສັດນໍ້າ ທຸກປະເພດ ໃນ ສປປ ລາວ;

5. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບສັດນ້ຳ ແລະ ການປະມົງ;

6. ອອກໃບຢັ້ງຢືນ ສາຍພັນ, ສຸຂະພາບ ຫຼື ສຸຂານາໄມ ສັດນ້ຳ;

7. ກຳນົດມາດຕະຖານເຕັກນິກກ່ຽວກັບສັດນ້ຳ ແລະ ການປະມົງ ເປັນຕົ້ນ ການລ້ຽງ, ການຫາ ແລະ ການປຸງແຕ່ງ;

8. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ;

9. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ;

10. ອະນຸຍາດການ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ;

11. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ສຳລັບວຽກງານສັດນ້ຳ ແລະ ການປະມົງ;

12. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

13. ປະສານສົມທົບກັບກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ;

14. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

15. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ ຕໍ່ລັດຖະບານຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 86 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ ໃຫ້ສັງຄົມ ແລະ ປະຊາຊົນ;

3. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

4. ອະນຸຍາດເຄື່ອນຍ້າຍສັດນ້ຳ ບັນຊີ I ແລະ ບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ລະຫວ່າງ ແຂວງຕໍ່ແຂວງ;

5. ອອກໃບຢັ້ງຢືນ ສຸຂະພາບ ຫຼື ສຸຂານາໄມ ສັດນ້ຳ;

6. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ;

7. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ;

8. ສະເໜີ ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສັດນ້ຳ ແລະ ການປະມົງ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

10. ສະເໜີການອະນຸຍາດການ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ສັດນ້ຳ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ;

11. ປະສານສົມທົບກັບພະແນກການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ;

12. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 87 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ;

2. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັດນ້ຳ ແລະ ການປະມົງ ໃຫ້ສັງຄົມ ແລະ ປະຊາຊົນ;

3. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບສັດນ້ຳ ແລະ ການປະມົງ;

4. ອະນຸຍາດເຄື່ອນຍ້າຍສັດນ້ຳ ບັນຊີ I ແລະ ບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດນ້ຳ ລະຫວ່າງ ເມືອງຕໍ່ເມືອງ;

5. ອອກໃບຢັ້ງຢືນ ສຸຂະພາບ ຫຼື ສຸຂານາໄມ ສັດນ້ຳ;

6. ຂຶ້ນບັນຊີຊາວປະມົງ;

7. ສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ສ້າງວັງສະຫງວນ ຫຼື ເຂດປົກປັກຮັກສາ ສັດນ້ຳ ໂດຍມີການປະສານສົມທົບກັບອົງການປົກຄອງບ້ານທີ່ກ່ຽວຂ້ອງ ພ້ອມທັງຊີ້ນຳ, ຕິດຕາມ ການຄຸ້ມຄອງ ແລະ ນຳໃຊ້ເຂດດັ່ງກ່າວ;

8. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດນ້ຳ ແລະ ການປະມົງ;

9. ສະເໜີ ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສັດນ້ຳ ແລະ ການປະມົງ;

10. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ສັດນ້ຳ ແລະ ການປະມົງ;

11. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ສັດນ້ຳ ແລະ ການປະມົງ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັດນ້ຳ ແລະ ການປະມົງ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 88 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ແລະ ນຳໃຊ້ ສັດນ້ຳ ແລະ ການປະມົງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 89 (ປັບປຸງ) ເຈົ້າໜ້າທີ່ສັດນ້ຳ ແລະ ການປະມົງ**

ເຈົ້າໜ້າທີ່ສັດນ້ຳ ແລະ ການປະມົງ ແມ່ນ ພະນັກງານ-ລັດຖະກອນ ທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງວຽກງານສັດນ້ຳ ແລະ ການປະມົງ ແຕ່ລະຂັ້ນ ເພື່ອປະຈຳຢູ່ດ່ານ ຫຼື ປະຕິບັດໜ້າທີ່ສະເພາະໃດໜຶ່ງ.

ເຈົ້າໜ້າທີ່ສັດນ້ຳ ແລະ ການປະມົງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສັດນໍ້າ ແລະ ການປະມົງ;
2. ກວດກາ ສະຖານທີ່, ຄວາມຖືກຕ້ອງ ດ້ານເອກະສານ, ສັດນໍ້າ ແລະ ຜະລິດຕະພັນສິນຄ້າກ່ຽວກັບການປະມົງ;
3. ກວດກາຊະນິດ ແລະ ເຄື່ອງມືທີ່ນໍາໃຊ້ຫາສັດນໍ້າ ລວມທັງ ກວດກາລາດຕະເວນ;
4. ເກັບຕົວຢ່າງຈາກສັດນໍ້າ, ຜະລິດຕະພັນສິນຄ້າກ່ຽວກັບການປະມົງ ເພື່ອສົ່ງໄປວິໄຈ;
5. ລາຍງານກໍລະນີພົບພະຍາດສັດນໍ້າທີ່ຈໍາເປັນຕ້ອງແຈ້ງ ໃຫ້ອົງການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ;
6. ສັງລວມຂໍ້ມູນ ແລະ ຫຼັກຖານສົ່ງໃຫ້ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອດໍາເນີນການສືບສວນ-ສອບສວນ;
7. ປະສານສົມທົບກັບເຈົ້າໜ້າທີ່ອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 2
## ການກວດກາວຽກງານສັດນໍ້າ ແລະ ການປະມົງ

### ມາດຕາ 90 (ປັບປຸງ) ອົງການກວດກາວຽກງານສັດນໍ້າ ແລະ ການປະມົງ

ອົງການກວດກາວຽກງານສັດນໍ້າ ແລະ ການປະມົງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

### ມາດຕາ 91 (ໃໝ່) ເນື້ອໃນການກວດກາ

ການກວດກາ ວຽກງານສັດນໍ້າ ແລະ ການປະມົງ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັດນໍ້າ ແລະ ການປະມົງ;
2. ການປະຕິບັດໜ້າທີ່ຂອງ ການຈັດຕັ້ງ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ສັດນໍ້າ ແລະ ການປະມົງ;
3. ການເຄື່ອນໄຫວວຽກງານ ແລະ ການດໍາເນີນທຸລະກິດກ່ຽວກັບສັດນໍ້າ ແລະ ການປະມົງ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານສັດນໍ້າ ແລະ ການປະມົງ;
5. ເນື້ອໃນອື່ນທີ່ມີຄວາມຈໍາເປັນ.

### ມາດຕາ 92 (ປັບປຸງ) ຮູບການການກວດກາ

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນກວດກາວຽກງານສັດນໍ້າ ແລະ ການປະມົງ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ IX
## ງົບປະມານ, ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່, ຕາປະທັບ ແລະ ວັນປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ

**ມາດຕາ 93 (ປັບປຸງ) ງົບປະມານ**

ງົບປະມານນຳໃຊ້ເຂົ້າໃນວຽກງານສັດນ້ຳ ແລະ ການປະມົງ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ການຊ່ວຍເຫຼືອ ແລະ ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ສຳລັບການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 94 (ປັບປຸງ) ເຄື່ອງແບບ, ກາໝາຍ, ບັດເຈົ້າໜ້າທີ່ ແລະ ຕາປະທັບ**

ເຈົ້າໜ້າທີ່ສັດນ້ຳ ແລະ ການປະມົງ ມີເຄື່ອງແບບ, ກາໝາຍ, ບັດສະເພາະ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານສັດນ້ຳ ແລະ ການປະມົງ ໂດຍກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

**ມາດຕາ 95 (ປັບປຸງ) ວັນປ່ອຍປາ ແລະ ສັດນ້ຳແຫ່ງຊາດ**

ລັດ ກຳນົດເອົາວັນທີ 13 ກໍລະກົດ ຂອງທຸກປີ ເປັນວັນປ່ອຍປາ ແລະ ສັດນ້ຳແຫ່ງຊາດ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາສັດນ້ຳ ໃຫ້ອຸດົມສົມບູນ ແລະ ມີຄວາມຍືນຍົງ.

## ພາກທີ X
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 96 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາສັດນ້ຳ, ປົກປັກຮັກສາແຫຼ່ງທີ່ຢູ່ອາໄສ, ເຂດອະນຸລັກພັນສັດນ້ຳ, ວັງສະຫງວນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 97 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 98 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 99 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 2 ຕຸລາ 2023 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 9 ກໍລະກົດ 2009.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ